ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຄະນະບໍລິຫານງານພັກ ທຫລ ເຂົ້າຮ່ວມການວາງກະຕ່າດອກໄມ້ ເນື່ອງໃນໂອກາດ ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 68 ປີ



ໃນຕອນເຊົ້າຂອງວັນທີ 22 ມີນາ 2023 ທີ່ ຫໍພິພິທະພັນ ປະທານ ໄກສອນ ພົມວິຫານ (ຫຼັກ 6). ຄະນະບໍລິຫານງານພັກ ທະນາຄານແຫ່ງ ສປປ ລາວ (ທຫລ) ນຳໂດຍ ສະຫາຍ ບຸນເຫຼືອ ສິນໄຊວໍຣະວົງ ເລຂາຄະນະບໍລິຫານງານພັກ ທຫລ ພ້ອມດ້ວຍຄະນະນຳ ທຫລ ໄດ້ເຂົ້າຮ່ວມການວາງກະຕ່າດອກໄມ້ຕໍ່ໜ້າຮູບປັ້ນ ປະທານ ໄກສອນ ພົມວິຫານ ອາດີດເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ເນື່ອງໃນໂອກາດວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 68 ປີ (22 ມີນາ 1955 – 22 ມີນາ 2023) ແລະ ເພື່ອເປັນການສະແດງຄວາມຮູ້ບຸນຄຸນ ແລະ ລະນຶກເຖິງຄຸນງາມຄວາມດີ, ພາລະກິດອັນພົ້ນເດັ່ນ ຕະຫຼອດໄລຍະ 68 ປີ ທີ່ບັນດາທ່ານຜູ້ນຳພັກ ແລະ ນັກຮົບປະຕິວັດ ໄດ້ເສຍສະຫຼະເລືອດເນື້ອ ແລະ ທັງເປັນການຍົກສູງຄວາມສາມາດການນຳພາ ແລະ ລັກສະນະນຳໜ້າຂອງພັກ ເພື່ອສືບຕໍ່ເສີມຂະຫຍາຍມູນເຊື້ອອັນດີງາມຂອງພັກ ເຂົ້າໃນການຈັດຕັ້ງພາລະກິດປ່ຽນແປງໃໝ່ໃຫ້ປະກົດຜົນເປັນຈິງ.

**# ຂ່າວ-ພາບ: ວັນປະເສີດ ສີມບຸນຍັນ.**

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ